ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສູນກາງແນວລາວສ້າງຊາດ
ຄະນະປະຈຳ

ເລກທີ 227/ສນຊ.ຄປຈ.
ນະຄອນຫຼວງວຽງຈັນ, ວັນທີ 24.6.2020

# ຂໍ້ຕົກລົງ
## ວ່າດ້ວຍລະບຽບການຄົ້ນຄວ້າຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ

- ອີງຕາມ ກົດໝາຍ ວ່າດ້ວຍ ແນວລາວສ້າງຊາດ ສະບັບເລກທີ 49/ສພຊ, ລົງວັນທີ 20 ມິຖຸນາ 2018.
- ອີງຕາມ ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 05/ສພຊ, ລົງວັນ 09 ພະຈິກ 2016.
- ອີງຕາມ ຂໍ້ກຳນົດ ວ່າດ້ວຍການຄົ້ນຄ້ວາພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ເລກທີ 398/ຄກສພ, ລົງວັນທີ 26 ກັນຍາ 2019.
- ອີງຕາມ ຂໍ້ຕົກລົງຂອງຄະນະປະຈຳ ສູນກາງແນວລາວສ້າງຊາດ ສະບັບເລກທີ 250/ຄປຈ, ລົງວັນທີ 26 ກັນຍາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມກວດກາ.

### ຄະນະປະຈຳ ສູນກາງແນວລາວສ້າງຊາດ ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ຂັ້ນຕອນຮັບ ແລະ ການຄົ້ນຄວ້າຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳຂອງພະນັກງານ-ລັດຖະກອນ ແລະ ພົນລະເມືອງລາວບັນດາເຜົ່າ ທີ່ບໍ່ໄດ້ຮັບຄວາມເປັນທຳ ຫຼື ບໍ່ພໍໃຈຕໍ່ການຕັດສິນຂອງສານປະຊາຊົນ, ຂອງພາກສ່ວນທີ່ກ່ຽວຂ້ອງ, ແນໃສ່ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ ແລະ ເພີ່ມທະວີນິຕິທຳ, ປົກປັກຮັກສາຜົນປະໂຫຍດຂອງລັດ, ລວມໝູ່, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ປະເທດຊາດມີຄວາມຈະເລີນຜາສຸກມັ່ງຄັ່ງເຂັ້ມແຂງ, ຍຸຕິທຳ ແລະ ສີວິໄລ, ການປະຕິບັດລັດຖະທຳມະນູນ ແລະ ກົດໝາຍມີຄວາມສັກສິດ.

**ມາດຕາ 2 ຄວາມໝາຍຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ**

- ຄຳຮ້ອງຟ້ອງ: ແມ່ນຄຳຮ້ອງທີ່ເປັນລາຍລັກອັກສອນຂອງການຈັດຕັ້ງ, ສະມາຊິກພັກ, ພະນັກງານ ແລະ ພົນລະເມືອງກ່ຽວກັບການຕົກລົງບັນຫາໃດໜຶ່ງຂອງຄະນະພັກ, ການກະທຳຂອງສະມາຊິກພັກທີ່ຜູ້ຮ້ອງຟ້ອງເຫັນວ່າເປັນການລະເມີດມະຕິ, ຄຳສັ່ງ, ຂໍ້ກຳນົດ, ກົດລະບຽບຂອງພັກ, ກົດໝາຍ, ລະບຽບການຕ່າງໆຂອງລັດ ທີ່ຕົນເອງເຫັນວ່າບໍ່ໄດ້ຮັບຄວາມຍຸຕິທຳ ແລະ ແຕະຕ້ອງເຖິງສິດ, ຜົນປະໂຫຍດອັນຊອບທຳຂອງຕົນ.
- ຄຳຮ້ອງທຸກ: ແມ່ນຄຳຮ້ອງທີ່ເປັນລາຍລັກອັກສອນ ຂອງການຈັດຕັ້ງພັກ, ສະມາຊິກພັກ, ພະນັກງານກ່ຽວກັບການລົງວິໄນຕໍ່ການຈັດຕັ້ງພັກ ຫຼື ສະມາຊິກພັກ, ຊຶ່ງຜູ້ຮ້ອງທຸກເຫັນວ່າເປັນການລະເມີດກົດລະບຽບຂອງພັກ

ໝາຍຂອງລັດ ແລະ ບໍ່ມີຄວາມຍຸຕິທຳ.

- ຄຳສະເໜີ: ແມ່ນເອກະສານຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຍື່ນຕໍ່ອົງການປົກຄອງທ້ອງຖິ່ນ ຫຼື ລັດຖະບານ ເພື່ອພິຈາລະນາແກ້ໄຂກ່ຽວກັບການກະທຳ, ການຕົກລົງຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ເຫັນວ່າເປັນການລະເມີດບັນດາມະຕິ, ຄຳສັ່ງ ແລະ ກົດໝາຍ, ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ(ຕາມທີ່ກຳນົດໄວ້ໃນມາດຕາ 2 ຂອງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ).

- ຄຳຮ້ອງຂໍຄວາມເປັນທຳ: ແມ່ນເອກະສານທີ່ພົນລະເມືອງ ຫຼື ການຈັດຕັ້ງຍື່ນຕໍ່ສະພາແຫ່ງຊາດ ຫຼື ຫ້ອງການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເພື່ອພິຈາລະນາຄືນຜົນຂອງການແກ້ໄຂຄຳສະເໜີ ໂດຍອົງການບໍລິຫານລັດ, ການແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ໂດຍອົງການໄອຍະການ ຫຼື ສານ ທີ່ມີຜົນສັກສິດທາງດ້ານກົດໝາຍແລ້ວ, ຊຶ່ງຕົນເຫັນວ່າການແກ້ໄຂນັ້ນຍັງບໍ່ມີຄວາມຍຸຕິທຳ ແລະ ຖືກຕ້ອງສອດຄ່ອງກັບກົດໝາຍ.

- ການຄົ້ນຄວ້າຄຳຮ້ອງໝາຍເຖິງການຮັບເອົາເອກະສານຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳທີ່ເປັນລາຍລັກອັກສອນຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ແລະ ປະຊາຊົນລາວບັນດາເຜົ່າ, ມາຄົ້ນຄວ້າພິຈາລະນາ, ຊອກຫາວິທີທາງແກ້ໄຂ, ຊຸກຍູ້ອົງການຈັດຕັ້ງທີ່ມີສິດອຳນາດໃຫ້ມີການແກ້ໄຂ ເພື່ອແນໃສ່ເສີມຂະຫຍາຍສິດປະຊາທິປະໄຕຂອງພົນລະເມືອງເຂົ້າໃນການປະຕິບັດແນວທາງ, ແຜນນະໂຍບາຍ, ກົດລະບຽບຂອງພັກລັດຖະທຳມະນູນ ແລະ ກົດໝາຍຂອງລັດ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບສະມາຊິກພັກ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ພົນລະເມືອງ, ຜູ້ຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ສະເໜີ. ຜູ້ທີ່ຖືກຮ້ອງຟ້ອງ, ຖືກຮ້ອງທຸກ, ຖືກສະເໜີ ແລະ ການຈັດຕັ້ງທີ່ເຮັດໜ້າທີ່ໃນການຄົ້ນຄ້ວາພິຈາລະນາຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ.

## ໝວດທີ II
## ຫຼັກການ, ລະບຽບການ, ຂັ້ນຕອນຄົ້ນຄ້ວາ ແລະ ຄຳຮ້ອງທີ່ຮັບ ແລະ ບໍ່ຮັບຄົ້ນຄ້ວາພິຈາລະນາ

**ມາດຕາ 4 ຫຼັກການ**

ການຄົ້ນຄວ້າຄຳຮ້ອຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳຕ້ອງດຳເນີນບົນພື້ນຖານຫຼັກການດັ່ງນີ້:

1). ຕອ້ງປະຕິບັດໃຫ້ຖືກຕ້ອງຕາມກົດລະບຽບຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດໃຫ້ຖືກຕ້ອງສອດຄ່ອງກັບຄວາມເປັນຈິງ.

2). ປະຕິບັດຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລືເປັນໝູ່ຄະນະ, ຫຼີກເວັ້ນການຕັດສິນບັນຫາພຽງຝ່າຍດຽວ; ສະເໝີພາບຕໍ່ໜ້າກົດໝາຍ, ເປີດເຜີຍ, ຍຸຕິທຳ, ດຳເນີນຢ່າງຮອບດ້ານ, ພາວະວິໄສ, ໂປ່ງໃສ ແລະ ທັນກັບເວລາທີ່ກົດໝາຍກຳນົດ, ສາມາດກວດສອບໄດ້.

3. ການສະໜອງຂໍ້ມູນ, ຫຼັກຖານຕ້ອງຄົບຖ້ວນ, ຊັດເຈນ ແລະ ໄດ້ຮັບການຮ່ວມມື, ອຳນວຍຄວາມສະດວກຈາກບຸກຄົນ, ການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຜູ້ມາຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ.

4). ປະສານສົມທົບ, ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນເພື່ອຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ, ລະບຽບການ ແລະ ສອດຄ່ອງກັບຄວາມເປັນຈິງ.

5). ແຈ້ງຜົນການຄົ້ນຄ້ວາຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳໃຫ້ແກ່ການຈັດຕັ້ງ, ບຸກຄົນທີ່ຖືກຮ້ອງຟ້ອງ ແລະ ເຈົ້າຂອງຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳຊາບຢ່າງເປັນລາຍລັກອັກສອນ.

**ມາດຕາ 5 ລະບຽບການ ແລະ ຂັ້ນຕອນ**

ພາຍຫຼັງທີ່ໄດ້ຮັບເອກະສານທີ່ເປັນລາຍລັກອັກສອນຈາກບຸກຄົນທີ່ຍື່ນຄໍາຮ້ອງຟ້ອງ, ຮ້ອງທຸກ, ຄໍາສະເໜີ ແລະຄໍາຮ້ອງຂໍຄວາມເປັນທໍາ. ພະແນກຄົ້ນຄວ້າຄໍາຮ້ອງ, ຄໍາສະເໜີ ຫຼື ພະນັກງານຜູ້ທີ່ຄົ້ນຄວ້າຕ້ອງປະຕິບັດລະບຽບການ, ຂັ້ນຕອນດັ່ງນີ້:

1). ສັງລວມຫຍໍ້ຄວາມເປັນມາຂອງຂໍ້ຂັດແຍ່ງ, ການແກ້ໄຂຂອງບັນດາອົງການຈັດຕັ້ງພັກ-ລັດ, ຂໍ້ສະເໜີຂອງຜູ້ຮ້ອງຟ້ອງ, ຮ້ອງທຸກ, ຄໍາສະເໜີ ແລະ ຄໍາຮ້ອງຂໍຄວາມເປັນທໍາ ລາຍງານຫົວໜ້າກົມ, ປະທານກວດກາພັກ-ລັດສູນກາງແນວລາວສ້າງຊາດ ມີທິດຊີ້ນໍາໃນການຈັດຕັ້ງປະຕິບັດຕົວຈິງ ໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດວາງອອກ.

2). ເຊີນ ຫຼື ຮຽກຜູ້ຮ້ອງຟ້ອງ, ຮ້ອງທຸກ, ຄໍາສະເໜີ ແລະ ຄໍາຮ້ອງຂໍຄວາມເປັນທໍາ ຫຼື ຜູ້ຖືກຮ້ອງທຸກ, ບຸກຄົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງມາສອບຖາມຂໍ້ມູນ ຫຼື ໃຫ້ຄວາມກະຈ່າງແຈ້ງເພີ່ມເຕີມກ່ຽວກັບບັນຫາທີ່ພົວພັນກັບຄໍາຮ້ອງທຸກ ຫຼື ເຫັນວ່າການປະກອບເອກະສານບໍ່ທັນຄົບຖ້ວນ, ບໍ່ທັນຈະແຈ້ງ ຫຼື ຂັ້ນຕອນການປະກອບເອກະສານ, ການສະໜອງຂໍ້ມູນຫຼັກຖານຍັງບໍ່ທັນຄົບຖ້ວນແລ້ວເຮັດບົດບັນທຶກ.

3). ສະເໜີຂໍຄໍາເຫັນ ແລະ ທິດຊີ້ນໍາຈາກຄະນະພັກ, ຄະນະກວດກາຖ້າກໍລະນີຈໍາເປັນທີ່ຈະຕ້ອງໄດ້ລົງເກັບກໍາຂໍ້ມູນ, ຫຼັກຖານເພີ່ມເຕີມ.

4). ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອລົງເກັບກໍາຂໍ້ມູນ, ຫຼັກຖານບ່ອນຂໍ້ຂັດແຍ່ງເກີດຂຶ້ນ ເພື່ອເປັນປະໂຫຍດໃຫ້ແກ່ການແກ້ໄຂຄໍາຮ້ອງຟ້ອງ, ຄໍາຮ້ອງທຸກ, ຄໍາສະເໜີ ແລະ ຄໍາຮ້ອງຂໍຄວາມເປັນທໍາ.

5). ເຮັດບົດສະຫຼຸບລາຍງານຜົນການລົງເກັບກໍາຂໍ້ມູນ, ພ້ອມທັງສະເໜີວິທີທາງແກ້ໄຂ.

6). ນໍາສົ່ງສໍານວນເອກະສານຄໍາຮ້ອງທຸກໄປຍັງກະຊວງ, ອົງການທີ່ກ່ຽວຂ້ອງເພື່ອຄົ້ນຄວ້າພິຈາລະນາແກ້ໄຂ.

7). ຕິດຕາມ, ຊຸກຍູ້ການແກ້ໄຂ ຄໍາຮ້ອງທຸກຂອງບັນດາກະຊວງ, ອົງການທີ່ກ່ຽວຂ້ອງ.

8). ລາຍງານຜົນການແກ້ໄຂຄໍາຮ້ອງທຸກຂອງກະຊວງ, ອົງການຕໍ່ຄະນະພັກ, ຄະນະກວດກາ.

9). ເອກະສານຄໍາຮ້ອງທຸກທີ່ຍື່ນຕໍ່ຄະນະກວດກາແນວລາວສ້າງຊາດຕ້ອງແມ່ນເອກະສານທີ່ບໍ່ຍື່ນໃຫ້ພາກສ່ວນອື່ນໃນຂະນະດຽວກັນ ຫຼື ຕ້ອງເປັນເອກະສານທີ່ໄດ້ຮັບການຄົ້ນຄວ້າພິຈາລະນາແກ້ໄຂຢູ່ຂັ້ນທ້ອງຖິ່ນຮາກຖານມາແລ້ວແຕ່ອີກຝ່າຍໜຶ່ງບໍ່ມີຄວາມພໍໃຈຕໍ່ກັບການແກ້ໄຂດັ່ງກ່າວເປັນຕົ້ນແມ່ນຂັ້ນເມືອງ ແລະ ຂັ້ນແຂວງຕາມຂັ້ນຕອນຂອງຂະບວນການຍຸຕິທໍາ.

10). ຄໍາສະເໜີແມ່ນຄະນະກວດກາແນວລາວສ້າງຊາດ ຈະຄົ້ນຄວ້າພິຈາລະນານໍາສົ່ງສໍານວນເອກະສານເຖິງອົງການລັດທີ່ກ່ຽວຂ້ອງ, ຖ້າແມ່ນຄໍາຮ້ອງຟ້ອງຈະຄົ້ນຄວ້າພິຈາລະນານໍາສົ່ງສໍານວນເອກະສານໃຫ້ອົງການສືບສວນ-ສອບສວນ, ສານ, ໄອຍະການ, ຖ້າແມ່ນຄໍາຮ້ອງຂໍຄວາມເປັນທໍາແມ່ນຈະຄົ້ນຄວ້າພິຈາລະນານໍາສົ່ງໃຫ້ແກ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ/ນະຄອນຫຼວງ(ໃນກໍລະນີຫາກບໍ່ທັນໄດ້ຮັບການແກ້ໄຂຕາມຂັ້ນຕອນ).

**ມາດຕາ 6 ຄໍາຮ້ອງຟ້ອງ, ຮ້ອງທຸກ, ຄໍາສະເໜີ ທີ່ຮັບຄົ້ນຄ້ວາພິຈາລະນາ**

1. ຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ ທີ່ບໍ່ພໍໃຈຕໍ່ການຕົກລົງວິໄນ ແລະ ການຕົກລົງຂອງການຈັດຕັ້ງພັກ-ລັດກ່ຽວກັບບັນຫາໃດໜຶ່ງທີ່ລະເມີດກົດລະບຽບພັກ ແລະ ກົດໝາຍຂອງລັດ.
2. ຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ ບໍ່ພໍໃຈຕໍ່ການປະຕິບັດສິດ, ໜ້າທີ່ຂອງພະນັກງານ-ສະມາຊິກພັກທີ່ສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ ແລະ ໜ້າທີ່ຕໍາແໜ່ງເກີນຂອບເຂດ, ສໍ້ລາດບັງຫລວງ, ລະເມີດມະຕິ, ຄໍາສັ່ງ, ກົດລະບຽບພັກ, ກົດໝາຍຂອງລັດ ແລະ ປະກົດການຫຍໍ້ທໍ້ອື່ນໆ.
3. ຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີທີ່ບໍ່ພໍໃຈຕໍ່ການປະຕິບັດສິດໜ້າທີ່ຂອງສະມາຊິກພັກ, ພະນັກງານ

ໃນຂົງເຂດຍຸຕິທຳ ທີ່ຄົນເຫັນວ່າມີການລະເມີດລະບຽບກົດໝາຍ, ມີປະກົດການຂົ່ມຂູ່, ຮັບສິນບົນ ແລະ ພຶດຕິກຳອື່ນໆທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫລວງ;

4. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ຍັງບໍ່ທັນມີການຈັດຕັ້ງໃດພິຈາລະນາແກ້ໄຂ ຫຼື ແກ້ໄຂແລ້ວ ແຕ່ຜູ້ຮ້ອງຟ້ອງ, ຮ້ອງທຸກ ແລະ ສະເໜີຍັງເຫັນວ່າບໍ່ມີຄວາມເປັນທຳ.

5. ຄຳຮ້ອງທຸກ ທີ່ເປັນຄຳຮ້ອງຂໍຄວາມເປັນທຳນັ້ນຕ້ອງໄດ້ຜ່ານການແກ້ໄຂທາງດ້ານບໍລິຫານລັດສິ້ນສຸດເສຍກ່ອນ ຫຼື ຖ້າເປັນຄຳຕັດສິນຂອງສານກໍ່ຕໍ່ເມື່ອສິ້ນສຸດຂະບວນການຍຸຕິທຳ ຫຼື ການຕັດສິນຂອງສານໃຊ້ໄດ້ເດັດຂາດແລ້ວແຕ່ມີຂໍ້ມູນ, ຫຼັກຖານໃໝ່.

**ມາດຕາ 7 ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ບໍ່ຮັບພິຈາລະນາ**

1. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ເຂົ້າສູ່ຂະບວນການຍຸຕິທຳແຕ່ຍັງບໍ່ທັນສິ້ນສຸດ.

2. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີຂອງຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ ແລະ ຜູ້ທີ່ເປັນບ້າ, ເສຍຈິດ ແລະ ບໍ່ມີຜູ້ຕາງໜ້າຢ່າງຖືກຕ້ອງຕາມລະບຽບ, ກົດໝາຍ.

3. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ມີເຈດຕະນາໃສ່ຮ້າຍປ້າຍສີ,ໂຄ່ນລົ້ມໂຈມຕີຕໍ່ແນວທາງນະໂຍບາຍຂອງພັກ.

4. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ສິ້ນສຸດຂະບວນການແກ້ໄຂທາງດ້ານບໍລິຫານ ຫຼື ການແກ້ໄຂທາງຂະບວນການຍຸຕິທຳ, ສານຕັດສິນໃຊ້ໄດ້ເດັດຂາດແລ້ວແຕ່ບໍ່ມີຂໍ້ມູນໃໝ່.

5. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ມີເນື້ອໃນບໍ່ຄົບຖ້ວນ, ໜັກແໜ້ນ, ຂໍ້ມູນ, ຫຼັກຖານບໍ່ຮັດກຸມ.

6. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ບໍ່ໃສ່ຊື່, ທີ່ຢູ່ຂອງຜູ້ມາຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ.

7. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ໄດ້ຍື່ນໄປຫາຫຼາຍພາກສ່ວນ(ແຕ່ຕ້ອງໄດ້ປະສານງານໄປຫາພາກສ່ວນທີ່ກ່ຽວຂ້ອງ).

8. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ບໍ່ພົວພັນເຖິງການປະຕິບັດໜ້າທີ່ຂອງການຈັດຕັ້ງພັກ-ລັດ ແລະການປະຕິບັດໜ້າທີ່ວຽກງານ ຂອງສະມາຊິກພັກ-ພະນັກງານ.

9. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ບໍ່ໄດ້ຜ່ານການແກ້ໄຂຈາກການຈັດຕັ້ງຂັ້ນລຸ່ມ.

## ໝວດທີ III

## ອົງການຈັດຕັ້ງຄົ້ນຄ້ວາພິຈາລະນາແກ້ໄຂ, ສິດ, ພັນທະ ແລະ ຂໍ້ຫ້າມ

**ມາດຕາ 8 ການຈັດຕັ້ງຄົ້ນຄ້ວາຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ**

ພະແນກຄົ້ນຄ້ວາຄຳຮ້ອງ, ຄຳສະເໜີ ແລະ ຕິດຕາມຜົນຂອງການກວດກາ (ກົມກວດກາສູນກາງແນວລາວສ້າງຊາດ), ຂະແໜງກວດກາແນວລາວສ້າງຊາດແຂວງ, ໜ່ວຍງານກວດກາແນວລາວສ້າງຊາດເມືອງ.

**ມາດຕາ 9 ການພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ**

ຄະນະພັກ, ຄະນະປະຈຳພັກ ແລະ ຄະນະກວດກາພັກແຕ່ລະຂັ້ນຄົ້ນຄ້ວາພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳທີ່ເຫັນວ່າການແກ້ໄຂບັນຫາຍັງບໍ່ທັນຖືກຕ້ອງສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດວາງອອກ ໂດຍມີໜັງສືສະເໜີຫາພາກສ່ວນກ່ຽວຂ້ອງທີ່ມີສິດອຳນາດໃນການຕົກລົງແກ້ໄຂບັນຫາເຊັ່ນ: ສະພາແຫ່ງຊາດ, ສະພາປະຊາຊົນນະຄອນຫຼວງ, ແຂວງ, ອົງການບໍລິຫານແຕ່ລະຂັ້ນ

ຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ກົດໝາຍວ່າດ້ວຍແນວລາວສ້າງຊາດ(ສະບັບປັບປຸງ) ເລກທີ 19/ສພຊ, ລົງວັນທີ 20 ມິຖຸນາ 2018.

ມາດຕາ 10 ສິດ, ພັນທະ ແລະ ຂໍ້ຫ້າມຂອງການຈັດຕັ້ງ

1). ການຈັດຕັ້ງ, ບຸກຄົນ ທີ່ຄົ້ນຄວ້າຄຳຮ້ອງ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳມີສິດ ດັ່ງນີ້:

- ທວງເອົາເອກະສານ, ຂໍ້ມູນ, ຫຼັກຖານຈາກບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ.

- ຮຽກເຊີນການຈັດຕັ້ງ ຫຼື ບຸກຄົນ ທີ່ກ່ຽວຂ້ອງມາລາຍງານ ແລະ ໃຫ້ຂໍ້ມູນ, ອະທິບາຍ, ຊີ້ແຈງກ່ຽວກັບບັນຫາທີ່ຮ້ອງຟ້ອງ, ຮ້ອງທຸກ.

- ສະເໜີຄະນະພັກ, ຄະນະປະຈຳ ຕົກລົງດຳເນີນການກວດກາ ຕາມເນື້ອໃນຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ ຫຼື ຄະນະພັກ, ອຳນາດການປົກຄອງທີ່ກ່ຽວຂ້ອງປັບປຸງແປງຮູບການລົງວິໄນຕໍ່ການຈັດຕັ້ງພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ປະຊາຊົນລາວບັນດາເຜົ່າ ທີ່ປະຕິບັດບໍ່ຖືກຕາມລະບຽບກົດໝາຍ;

2). ການຈັດຕັ້ງ, ບຸກຄົນ ທີ່ຄົ້ນຄວ້າຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະຄຳຮ້ອງຂໍຄວາມເປັນທຳ ມີພັນທະດັ່ງນີ້:

-ຮັບແລະຄົ້ນຄວ້າພິຈາລະນາຄຳຮ້ອງຟ້ອງຕໍ່ການຈັດຕັ້ງ, ສະມາຊິກທີ່ຂຶ້ນກັບການຄຸ້ມຄອງຂອງຄະນະພັກຂັ້ນຕົນ.

- ຮັບແລະຄົ້ນຄວ້າພິຈາລະນາຄຳຮ້ອງທຸກຂອງການຈັດຕັ້ງພັກ, ສະມາຊິກພັກຕໍ່ການຈັດຕັ້ງພັກກ່ຽວກັບການລົງວິໄນພາຍໃນພັກ.

- ຮັບ ແລະ ຄົ້ນຄວ້າພິຈາລະນາຄຳສະເໜີຂອງການຈັດຕັ້ງ ຫຼື ພົນລະເມືອງຕໍ່ການປະຕິບັດພາລະບົດບາດຂອງອົງການລັດບໍລິຫານ, ການປະຕິບັດໜ້າທີ່ຂອງພະນັກງານລັດຖະກອນ, ທະຫານ, ຕຳຫຼວດ ທີ່ຂຶ້ນກັບສິດຄຸ້ມຄອງຂອງອົງການປົກຄອງຂັ້ນຕົນ.

- ດຳເນີການເກັບກຳຂໍ້ມູນ, ຫຼັກຖານກ່ຽວກັບການຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີໃຫ້ຮັດກຸມ, ຊັດເຈນ, ຄົບຖ້ວນ, ພາວະວິໃສ, ຖືກກັບສະພາບຄວາມເປັນຈິງ ແລະ ທັນເວລາ;

- ດຳເນີການກວດກາຕາມຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ຂຶ້ນກັບການຄຸ້ມຄອງຂອງຄະນະພັກ ແລະ ອົງການປົກຄອງຂັ້ນຕົນ.

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາ ເມື່ອເຫັນວ່າເນື້ອໃນຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີທີ່ພົວພັນກັບຫຼາຍພາກສ່ວນ ແລະ ມີຄວາມຫຍຸ້ງຍາກ, ສັບສົນ.

- ສົ່ງ ແລະ ຕິດຕາມ ສຳນວນເອກະສານຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳຮ້ອງຂໍຄວາມເປັນທຳ ທີ່ບໍ່ນອນໃນພາລະບົດບາດຂອງຕົນ ໄປຍັງພາກສ່ວນທີ່ກ່ຽວຂ້ອງພິຈາລະນາແກ້ໄຂ.

- ສະຫຼຸບຜົນການກວດກາ ຕາມຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ພ້ອມທັງສະເໜີວິທີການແກ້ໄຂໃຫ້ຄະນະພັກ, ອົງການປົກຄອງພິຈາລະນາຕົກລົງ.

- ຕິດຕາມ, ຊຸກຍູ້ການປະຕິບັດຜົນການຕົກລົງແກ້ໄຂຂອງຄະນະພັກ, ອົງການປົກຄອງໃຫ້ຖືກຕ້ອງ ແລະ ທັນກຳນົດເວລາ.

- ຄຸ້ມຄອງສຳນວນເອກະສານຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ.

3). ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ບຸກຄົນທີ່ຄົ້ນຄວ້າຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ ມີດັ່ງນີ້:

- ກົດໜ່ວງ, ທ່ວງດຶງ, ເມີນເສີຍ, ຂາດຄວາມຮັບຜິດຊອບ ໃນການຄົ້ນຄວ້າພິຈາລະນາຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ.

- ສວຍໃຊ້ໜ້າທີ່, ຕຳແໜ່ງເພື່ອສະເໜີ, ຂໍເອົາ, ທວງເອົາ ແລະ ຮັບສິນບົນ ຫຼື ຫາຜົນປະໂຫຍດໃຫ້ແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ຈຸ້ມເຈື້ອເຊື້ອສາຍ, ພັກພວກຂອງຕົນທີ່ບໍ່ຖືກຕ້ອງ.

- ປົກປິດ, ເຊື່ອງອຳ, ທຳລາຍຂໍ້ມູນ, ຫຼັກຖານ ຫຼື ເອກະສານຕ່າງໆທີ່ກ່ຽວຂ້ອງ.
- ເປີດເຜີຍຄວາມລັບກ່ຽວກັບເນື້ອໃນຂອງຜູ້ຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ສະເໜີ.
- ບັງຄັບ, ປາບປາມ ຫຼື ນາບຂູ່ຕໍ່ຜູ້ຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ສະເໜີ ຫຼື ຜູ້ຖືກຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ຖືກສະເໜີ ຫຼື ມີພຶດຕິກຳອື່ນໆທີ່ຜິດຕໍ່ກົດໝາຍ ແລະ ລະບຽບການ.

4). ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ

- ຍຸແຍ່, ຊັກຊວນ ຫຼື ຊື້ຈ້າງ ຜູ້ອື່ນໃຫ້ຮ້ອງຟ້ອງ, ຮ້ອງທຸກ ແລະ ສະເໜີ.
- ແຊກແຊງ, ບັງຄັບ, ນາບຂູ່ພະນັກງານທີ່ຄົ້ນຄວ້າພິຈາລະນາຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ.
- ປົກປິດ, ເຊື່ອງອຳຜູ້ທີ່ຖືກຮ້ອງຟ້ອງ, ຮ້ອງທຸກ ແລະ ຖືກສະເໜີ ຫຼື ປິດບັງ, ທຳລາຍຂໍ້ມູນ, ຫຼັກຖານ ແລະ ເອກະ ສານຕ່າງໆທີ່ກ່ຽວຂ້ອງ ຫຼື ມີພຶດຕິກຳອື່ນທີ່ຜິດຕໍ່ກົດໝາຍ ແລະ ລະບຽບການ.

## ໝວດທີ IV
## ສິດ, ພັນທະ, ຂໍ້ຫ້າມຂອງຜູ້ຍື່ນຄຳຮ້ອງ ແລະ ຜູ້ຖືກຮ້ອງຟ້ອງ

**ມາດຕາ 11 ສິດ ຜູ້ຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ**

1.ຍື່ນຄຳຮ້ອງ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳດ້ວຍຕົນເອງ ຫຼື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ.

2.ໄດ້ຮັບການປົກປ້ອງຈາກການນາບຂູ່, ບັງຄັບ ແລະ ຮັກສາຄວາມລັບໃນສິ່ງທີ່ຕົນເອງໄດ້ລາຍງານ, ລວມທັງຊື່ ແລະ ນາມສະກຸນ, ທີ່ຢູ່, ນາມປາກກາ ແລະ ອື່ນໆ.

3.ໄດ້ຮັບການຟື້ນຟູຄືນກ່ຽວກັບສິດຂອງຕົນທີ່ຖືກລະເມີດ ແລະ ໄດ້ຮັບການໃຊ້ແທນຄ່າເສຍຫາຍຈາກຜູ້ລະເມີດຕາມກົດໝາຍ ແລະ ລະບຽບການ.

4.ຖອນຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳຂອງຕົນໃນທຸກຂັ້ນຕອນຂອງການຄົ້ນຄວ້າພິຈາລະນາ.

5.ໄດ້ຮັບການແນະນຳ ແລະ ຮັບຊາບຜົນຂອງການຄົ້ນຄວ້າແກ້ໄຂຢ່າງເປັນລາຍລັກອັກສອນຈາກອົງການທີ່ກ່ຽວຂ້ອງ.

**ມາດຕາ 12 ພັນທະຂອງຜູ້ຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ**

1. ແຈ້ງຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ, ເບີໂທລະສັບຂອງຕົນໃຫ້ຖືກຕ້ອງຊັດເຈນໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ.
2. ຊີ້ແຈງ, ອະທິບາຍກ່ຽວກັບຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳຂອງຕົນໃຫ້ຈະແຈ້ງ, ຖືກ ຕ້ອງຕາມຄວາມຈິງ, ພ້ອມທັງສະໜອງຂໍ້ມູນ, ຫຼັກຖານໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງໃຫ້ຄົບຖ້ວນ ແລະ ທັນເວລາ.
3. ຮັບຜິດຊອບຕໍ່ເນື້ອໃນຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ, ຂໍ້ມູນ, ຫຼັກຖານທີ່ຕົນນຳມາສະເໜີຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ.
4. ປະຕິບັດຕາມການເຊີນຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ.
5. ປະພຶດຕົວໃຫ້ເໝາະສົມ ແລະ ເຄົາລົບຕໍ່ກົດລະບຽບຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ.
6. ປະຕິບັດຕາມຂໍ້ຕົກລົງກ່ຽວກັບຜົນຂອງການຄົ້ນຄວ້າພິຈາລະນາແກ້ໄຂທີ່ມີຜົນສັກສິດທາງດ້ານກົດໝາຍ.

**ມາດຕາ 13 ຂໍ້ຫ້າມຂອງຜູ້ຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ**

1. ຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳທີ່ບໍ່ມີມູນຄວາມຈິງ.

- ສວຍໃຊ້ການສະເໜີ, ການຮ້ອງຟ້ອງ, ຮ້ອງທຸກ ເພື່ອໃສ່ຮ້າຍປ້າຍສີ, ໂຈມຕີຜູ້ອື່ນ, ກໍ່ຄວາມບໍ່ສະຫງົບໃຫ້ແກ່ການຈັດຕັ້ງ ແລະ ສັງຄົມ.

- ຊື້ຈ້າງຈອບອອຍ, ປາບປາມ, ນາບຄູ່, ໃຊ້ຄວາມຮຸນແຮງ, ໃຫ້ສິນບົນແກ່ການຈັດຕັ້ງ, ບຸກຄົນຜູ້ມີໜ້າທີ່ໃນການຄົ້ນຄວ້າຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳຂອງຕົນ.

- ແອບອ້າງປົດບາດ ແລະ ອິດທິພົນຂອງຜູ້ອື່ນ.

- ມີພຶດຕິກຳອື່ນທີ່ຜິດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 14 ສິດ ຂອງຜູ້ຖືກຮ້ອງຟ້ອງ, ຮ້ອງທຸກ ແລະ ຖືກສະເໜີ**

1). ຜູ້ຖືກຮ້ອງຟ້ອງ, ຮ້ອງທຸກ ແລະ ຖືກສະເໜີ ມີສິດ ດັ່ງນີ້:

- ຮັບຊາບກ່ຽວກັບເນື້ອໃນຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທີ່ມີຕໍ່ຕົນເອງ.

- ປົກປ້ອງຕົນເອງດ້ວຍການນຳເອົາຂໍ້ມູນ, ຫຼັກຖານທີ່ຖືກຕ້ອງມາຢັ້ງຢືນ ແລະ ໃຫ້ຄຳຊີ້ແຈງ.

- ໄດ້ຮັບການຟື້ນຟູກຽດສັກສີ ແລະ ຜົນປະໂຫຍດອື່ນໆ ທີ່ເສຍຫາຍຈາກການຮ້ອງຟ້ອງ, ຮ້ອງທຸກ ແລະ ການສະເໜີທີ່ບໍ່ມີມູນຄວາມຈິງ.

**ມາດຕາ 15 ມີພັນທະ ຜູ້ຖືກຮ້ອງຟ້ອງ, ຮ້ອງທຸກ ແລະ ຖືກສະເໜີ**

- ຊີ້ແຈງ, ອະທິບາຍກ່ຽວກັບບັນຫາທີ່ຖືກຮ້ອງຟ້ອງ, ຮ້ອງທຸກ,ຖືກສະເໜີ, ພ້ອມທັງສະເໜີຂໍ້ມູນຫຼັກຖານທີ່ຖືກຕ້ອງໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງໃຫ້ຄົບຖ້ວນ ແລະ ທັນເວລາ;

- ປະຕິບັດຕາມການເຊີນຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;

- ປະພຶດຕົວໃຫ້ເໝາະສົມ ແລະ ເຄົາລົບຕໍ່ກົດລະບຽບຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;

- ປະຕິບັດຕາມຂໍ້ຕົກລົງກ່ຽວກັບຜົນຂອງການຄົ້ນຄວ້າພິຈາລະນາແກ້ໄຂທີ່ມີຜົນສັກສິດທາງດ້ານກົດໝາຍ.

**ມາດຕາ 16 ຂໍ້ຫ້າມສຳລັບຜູ້ຖືກຮ້ອງຟ້ອງ, ຮ້ອງທຸກ, ຮ້ອງຂໍຄວາມເປັນທຳ ແລະ ຖືກສະເໜີ.**

- ຫ້າມຊື້ຈ້າງ,ຈອບອອຍ, ໃຫ້ສິນບົນ, ບັງຄັບ, ນາບຄູ່, ໃຊ້ຄວາມຮຸນແຮງຕໍ່ຜູ້ທີ່ມີສິດ, ໜ້າທີ່ໃນການຄົ້ນຄວ້າແກ້ໄຂ ຄຳສະເໜີ, ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳຮ້ອງຂໍຄວາມເປັນທຳ; ຜູ້ສະເໜີ, ຜູ້ຮ້ອງຟ້ອງ, ຜູ້ຮ້ອງທຸກ ແລະ ຜູ້ຮ້ອງຂໍຄວາມເປັນທຳ.

- ຫ້າມປົກປິດ, ເຊື່ອງອຳ, ທຳລາຍຂໍ້ມູນ, ຫຼັກຖານກ່ຽວກັບຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ.

- ຫ້າມແອບອ້າງປົດບາດ ແລະ ສວຍໃຊ້ອິດທິພົນຂອງຜູ້ອື່ນ.

- ຫ້າມມີພຶດຕິກຳອື່ນໆທີ່ຜິດຕໍ່ກົດໝາຍ ແລະ ລະບຽບການ.

## ໝວດທີ V
## ເນື້ອໃນ, ເປົ້າໝາຍ ແລະ ກຳນົດເວລາ

**ມາດຕາ 17 ເນື້ອໃນ**

ຄຳຮ້ອງ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ ຕ້ອງປະກອບມີເນື້ອໃນຄົບຖ້ວນດັ່ງນີ້:

- ຊື່ ແລະ ສະຖານທີ່ການຈັດຕັ້ງທີ່ຜູ້ຮ້ອງທຸກຍື່ນຄຳຮ້ອງທຸກ

- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ, ເບີໂທລະສັບ ແລະ ທີ່ຢູ່ທາງເອເລັກໂຕຣນິກ

- ຄວາມເປັນມາຂອງເຫດການ ຫຼື ຂໍ້ຂັດແຍ່ງ, ຜົນການແກ້ໄຂຂອງອົງການທີ່ກ່ຽວຂ້ອງ, ບັນຫາທີ່ຕ້ອງການໃຫ້ແກ້ໄຂ ໂດຍອ້າງເຫດຜົນ ແລະ ມີຂໍ້ມູນຫຼັກຖານອ້າງອີງ;

- ສະຖານທີ່, ວັນທີ, ລາຍເຊັນ ແລະ ລາຍໂປ້ມືຜູ້ຮ້ອງທຸກ ຫຼື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ.

ກໍລະນີຫາກເປັນການລາຍງານຫຼື ແຈ້ງຄວາມປາກເປົ່າ, ຕ້ອງເຮັດບົດບັນທຶກເປັນລາຍລັກອັກສອນ, ຖ້າການລາຍງານ ຫຼື ການແຈ້ງຄວາມດັ່ງກ່າວແມ່ນອົງການຈັດຕັ້ງສາກົນ ຫຼື ຄົນຕ່າງປະເທດ ທີ່ເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບ.

**ມາດຕາ 18 ເປົ້າໝາຍ**

- ການຈັດຕັ້ງພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນໃນການຄຸ້ມຄອງຂອງຕົນ.
- ອົງການຈັດຕັ້ງສັງຄົມ, ລັດວິສາຫະກິດ, ຜູ້ປະກອບການທຸລະກິດ ແລະ ພົນລະເມືອງລາວ.

**ມາດຕາ 19 ການກໍານົດເວລາ**

ຄະນະກວດກາວຽກງານແນວລາວສ້າງຊາດ, ກົມກວດກາຕ້ອງຮີບຮ້ອນຄົ້ນຄວ້າພິຈາລະນາພາຍໃນເວລາ 20 ວັນ ນັບແຕ່ວັນທີ່ໄດ້ຮັບສໍານວນເອກະສານເປັນຕົ້ນໄປ; ພາຍຫຼັງທີ່ໄດ້ມີການຄົ້ນຄວ້າ ແລະ ສົ່ງສໍານວນເອກະສານເຖິງອົງການຈັດຕັ້ງພັກ-ລັດທີ່ກ່ຽວຂ້ອງແລ້ວ, ຄະນະກວດກາວຽກງານແນວລາວສ້າງຊາດ ຕ້ອງແຈ້ງໃຫ້ຜູ້ມາຍື່ນຄໍາຮ້ອງ, ຄໍາສະເໜີ ແລະ ຄໍາຮ້ອງຂໍຄວາມເປັນທໍາຮັບຊາບ, ພ້ອມທັງສືບຕໍ່ຊຸກຍູ້ ແລະ ຕິດຕາມການຄົ້ນຄວ້າແກ້ໄຂຂອງພາກສ່ວນທີ່ກ່ຽວຂ້ອງ ເພື່ອລາຍງານຕໍ່ຄະນະພັກ, ຄະນະປະຈໍາ, ໃນນັ້ນ, ລວມທັງຂໍ້ມູນລາຍງານຈາກສາຍດ່ວນ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ຄະນະກວດກາວຽກງານແນວລາວສ້າງຊາດແຕ່ລະຂັ້ນ, ການຈັດຕັ້ງແນວລາວສ້າງຊາດ ແຕ່ສູນກາງຮອດທ້ອງຖິ່ນຈົ່ງຮັບຮູ້ ແລະ ມີຄວາມຮັບຜິດຊອບເຜີຍແຜ່, ເຊື່ອມຊຶມ ຂໍ້ຕົກລົງສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ຈະມີການປັບປຸງແປງເມື່ອເຫັນວ່າເນື້ອໃນບໍ່ເໝາະສົມ, ບໍ່ສອດຄ່ອງກັບສະພາບຕົວຈິງ.

**ຄະນະປະຈໍາສູນກາງແນວລາວສ້າງຊາດ**

**ປະທານ**




**ປອ ໄຊສົມພອນ ພົມວິຫານ**